## ຄຳເຫັນຂອງ ທ່ານນາຍົກລັດຖະມົນຕີ
## ຕໍ່ເວັບໄຊລັດຖະບານ

ເພື່ອຮັບປະກັນໃຫ້ແກ່ການປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ, ໃຫ້ທ່ານນາຍົກລັດຖະມົນຕີ ແລະ ບັນດາທ່ານຮອງນາຍົກລັດຖະມົນຕີ ໃນການອຳນວຍ, ຄວບຄຸມການເຄື່ອນໄຫວວຽກງານຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ທັງເປັນເສນາທິການທີ່ດີ, ຜູ້ປະສານງານທີ່ດີ ແລະ ຜູ້ຮັບໃຊ້ບໍລິການທີ່ດີ ຂອງຫ້ອງວ່າການລັດຖະບານນັ້ນ ຂ້າພະເຈົ້າ ເຫັນວ່າ: ການເປີດເວັບໄຊຂອງລັດຖະບານ ແມ່ນມີຄວາມສຳຄັນ, ຈຳເປັນຫຼາຍ ແລະ ຈະເປັນໂອກາດ ແລະ ເປັນເຄື່ອງມືທີ່ດີ ໃຫ້ແກ່ຫ້ອງວ່າການລັດຖະບານ ເພື່ອໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ-ລັດເຮົາ, ການເຕີບໃຫຍ່ຂະຫຍາຍຕົວດ້ານການພັດທະນາເສດຖະກິດ-ສັງຄົມ ທັງເປັນເຄື່ອງມືໂຄສະນາດຶງດູດການລົງທຶນ, ການທ່ອງທ່ຽວ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ອື່ນໆ ທີ່ມີປະໂຫຍດຕໍ່ປະເທດເຮົາ. ນອກຈາກນັ້ນ, ໃນຖານະທີ່ປະເທດເຮົາ ໄດ້ເຂົ້າເປັນສະມາຊິກຂອງຫຼາຍສົນທິສັນຍາສາກົນ ຊຶ່ງໃນນັ້ນ ກໍ່ແມ່ນການເຂົ້າເປັນສະມາຊິກອົງການການຄ້າໂລກ ແລະ ການກະກຽມເຂົ້າເປັນສະມາຄົມເສດຖະກິດອາຊຽນ ໃນປີ 2015. ສະນັ້ນ, ການສ້າງເວັບໄຊຂອງລັດຖະບານ ກໍ່ຍິ່ງມີຄວາມຈຳເປັນຫຼາຍ ເພາະພວກເຮົາຈະໄດ້ມີການສື່ສານ, ໂຄສະນາ, ປະຊາສຳພັນ ເພື່ອແລກປ່ຽນຂໍ້ມູນຂ່າວສານກັບພາຍນອກ ກໍ່ຄືພາກພື້ນ ແລະ ສາກົນ.

ສະນັ້ນ, ຂ້າພະເຈົ້າ ຈຶ່ງຂໍຖືໂອກາດນີ້ ຂໍສະແດງຄວາມຊົມເຊີຍຕໍ່ຫ້ອງວ່າການລັດຖະບານ ທີ່ໄດ້ມີຄວາມພະຍາຍາມໃນການປະຕິບັດພາລະບົດບາດຂອງຕົນ ດ້ວຍຄວາມຮັບຜິດຊອບຢ່າງສູງ ເຂົ້າໃນການປັບປຸງລະບົບຂໍ້ມູນຂ່າວສານຂອງຕົນໃຫ້ທັນເປັນທັນສະໄໝເທື່ອລະກ້າວ ໂດຍເລີ່ມຕົ້ນຈາກຫ້ອງປະຊຸມຂອງລັດຖະບານ, ຫ້ອງຈໍລະຈອນເອກະສານ, ຫ້ອງຝຶກອົບຮົມ, ຫ້ອງເວັບໄຊ ແລະ ອື່ນໆ ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ບັນດາເຄື່ອງມືທີ່ທັນສະໄໝນີ້ ຈະກາຍເປັນພາຫານະໜຶ່ງທີ່ສຳຄັນໃນການປະກອບສ່ວນຊ່ວຍຊຸກຍູ້ເຄື່ອນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ທັງເປັນພື້ນຖານໃຫ້ແກ່ການຫັນປະເທດຊາດຂອງພວກເຮົາເປັນທັນສະໄໝ ເທື່ອລະກ້າວ.

ອວຍພອນໃຫ້ເວັບໄຊຂອງລັດຖະບານ ຈົ່ງເປັນສື່ມວນຊົນປະເພດໜຶ່ງ ທີ່ເປັນກະບອກສຽງໃນການເຮັດໜ້າທີ່ຊຸກຍູ້, ສົ່ງເສີມ ທັງຕິດຕາມກວດກາການເຄື່ອນໄຫວວຽກງານຂອງລັດຖະບານ ແຕ່ລະໄລຍະ ແລະ ອວຍພອນໃຫ້ເວັບໄຊຂອງລັດຖະບານປະສົບຜົນສຳເລັດ ໃນການປະຕິບັດໜ້າທີ່ອັນມີກຽດສູງສົ່ງຂອງຕົນ.

ຂອບໃຈ !

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

**ທອງສິງ ທຳມະວົງ**